# ອະນຸສັນຍາປະກອບ ນາໂກຢາ-ກູລາລຳປົວ
# ວ່າດ້ວຍສິດຜູກພັນ ແລະ ການຊົດເຊີຍຄວາມເສັຍຫາຍ
# ຂອງ ອະນຸສັນຍາ ຄາກຕາເຈນາ
# ວ່າດ້ວຍ ຄວາມປອດໄພດ້ານ ຊີວະເຕັກໂນໂລຊີ

# NAGOYA – KUALA LUMPUR SUPPLEMENTARY PROTOCOL ON LIABILITY AND REDRESS TO THE CARTAGENA PROTOCOL ON BIOSAFETY

ສະຖາບັນ ນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ
ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ

ນະຄອນຫຼວງວຽງຈັນ, ສິງຫາ 2013

# ອະນຸສັນຍາປະກອບ ນາໂກຢາ-ກູລາລຳປົວ
# ວ່າດ້ວຍສິດຜູກພັນ ແລະ ການຊົດເຊີຍຄວາມເສັຍຫາຍ
# ຂອງ ອະນຸສັນຍາ ຄາກຕາເຈນາ
# ວ່າດ້ວຍ ຄວາມປອດໄພດ້ານ ຊີວະເຕັກໂນໂລຊີ

## ປະເທດພາຄີຂອງອະນຸສັນຍາປະກອບ,

ເປັນປະເທດພາຄີຂອງອະນຸສັນຍາ ຄາກຕາເຈນາ ວ່າດ້ວຍ ຄວາມປອດໄພ ດ້ານ ຊີວະເຕັກໂນໂລຊີ ຂອງສົນທິສັນຍາວ່າດ້ວຍຊີວະນາໆພັນ, ຊຶ່ງຕໍ່ໄປນີ້ຈະກ່າວນາມວ່າ “ອະນຸສັນຍາ“,

ໂດຍອີງຕາມວັກທີ 13 ຂອງຖະແຫຼງການຣີໂອ ວ່າດ້ວຍສິ່ງແວດລ້ອມ ແລະ ການພັດທະນາ, ໂດຍປະຕິບັດຕາມກົນໄກໃນການປ້ອງກັນໄວ້ກ່ອນ ທີ່ບັນຈຸໄວ້ໃນວັກທີ 15 ຂອງຖະແຫຼງການຣີໂອ ວ່າດ້ວຍ ສິ່ງແວດລ້ອມ ແລະ ການພັດທະນາ,

ໂດຍອີງໃສ່ຄວາມຕ້ອງການໃນການສະໜອງ ມາດຕະການທີ່ເໝາະສົມຕໍ່ກັບກໍລະນີທີ່ເກີດຄວາມເສັຍຫາຍ ຫຼື ຄວາມເສັຍຫາຍຕໍ່ການດຳລົງຊີວິດປົກກະຕິ, ທີ່ບັນຈຸໄວ້ພາຍໃຕ້ ອະນຸສັນຍາ,

ໂດຍອີງໃສ່ມາດຕາທີ 27 ຂອງອະນະສັນຍາ,

## ໄດ້ມີການຕົກລົງດັ່ງນີ້:

## ມາດຕາ 1
## ຈຸດປະສົງ

ຈຸດປະສົງຂອງອະນຸສັນຍາປະກອບແມ່ນການອະນຸລັກ ແລະ ການນຳໃຊ້ແບບຍືນຍົງຂອງຊີວະນາໆພັນ, ໂດຍເອົາໃຈໃສ່ບັນຫາຄວາມສ່ຽງຕໍ່ສຸຂະພາບຂອງຄົນ, ດ້ວຍການກຳນົດຂະບວນການ ແລະ ລະບຽບການສາກົນທາງດ້ານສິດຜູກພັນ ແລະ ການຊົດເຊີຍຄວາມເສັຍຫາຍທີ່ເກີດຈາກ ສິ່ງທີ່ມີຊີວິດທີ່ມີການປ່ຽນແປງຄຸນລັກສະນະດ້ານ ພັນທຸກຳ.

## ມາດຕາ 2
## ການນຳໃຊ້ຄຳສັບ

1). ຄຳສັບທີ່ຖືກນຳໃຊ້ ກຳນົດໄວ້ໃນມາດຕາທີ 2 ຂອງສົນທິສັນຍາຊີວະນາໆພັນ, ຊຶ່ງຕໍ່ໄປນີ້ຈະກ່າວນາມວ່າ “ສົນທິສັນຍາ” ແລະ ມາດຕາທີ 3 ຂອງອະນຸສັນຍາ ຈະຖືກນຳໃຊ້ພາຍໃນ ອະນຸສັນຍາປະກອບສະບັບນີ້;

2). ໃນກໍລະນີທີ່ເພີ່ມເຕີມ, ສຳລັບເປົ້າໝາຍຂອງ ອະນຸສັນຍາປະກອບສະບັບນີ້:

(ກ) "ກອງປະຊຸມພາຄີ ທີ່ໃຊ້ເປັນການປະຊຸມຂອງບັນດາປະເທດທີ່ເປັນພາຄີຂອງອະນຸສັນຍາ" ໝາຍເຖິງ ກອງປະຊຸມພາຄີຂອງສົນທິສັນຍາຊີວະນາໆພັນທີ່ໃຊ້ເປັນການປະຊຸມ ປະເທດພາຄີຂອງອະນຸສັນຍາ ຄາກຕາເຈ ນາ ວ່າດ້ວຍ ຄວາມປອດໄພ ທາງດ້ານ ຊີວະເຕັກໂນໂລຊີ;

(ຂ) "ຄວາມເສັຍຫາຍ" ໝາຍເຖິງ ຜົນກະທົບອັນບໍ່ດີຕໍ່ການອະນຸລັກ ແລະ ການນຳໃຊ້ແບບຍືນຍົງຂອງ ຊີວະນາໆພັນ, ໂດຍເອົາໃຈໃສ່ບັນຫາຄວາມສ່ຽງຕໍ່ສຸຂະພາບຂອງຄົນ, ຊຶ່ງ:

(1) ເປັນສິ່ງທີ່ວັດແທກໄດ້ ຫຼື ໃນກໍລະນີທີ່ ສາມາດສັງເກດເຫັນໄດ້, ສາມາດພົບເຫັນ, ຖືກຮັບຮອງ ທາງດ້ານວິທະຍາສາດວິທະຍາການ ຈາກອົງກອນທີ່ຮັບຜິດຊອບ, ໂດຍເອົາໃຈໃສ່ຕໍ່ຄວາມຖີ່ ທີ່ເກີດຈາກຄົນ ແລະ ທຳມະຊາດ;

(2) ເປັນ "ສິ່ງທີ່ບົ່ງບອກ" ດັ່ງທີ່ກຳນົດເປັນລາຍລະອຽດໃນວັກທີ 3 ຢູ່ລຸ່ມນີ້;

(ຄ) "ຜູ້ປະສານ" ໝາຍເຖິງ ບຸກຄົນໃດໆທີ່ກ່ຽວພັນໂດຍກົງ ຫຼືທາງອ້ອມ ກ່ຽວກັບສິ່ງທີ່ມີຊີວິດທີ່ມີການປ່ຽນ ແປງຄຸນລັກສະນະ ທາງດ້ານພັນທຸກຳ, ຖືກກຳນົດດ້ວຍກົດໝາຍພາຍໃນປະເທດ ແລະ ຕາມຄວາມ ເປັນຈິງ, ຊຶ່ງສາມາດປະກອບດ້ວຍ ຜູ້ທີ່ໄດ້ຮັບການອະນຸມັດ, ຜູ້ທີ່ໄດ້ຈຳໜ່າຍສິ່ງທີ່ມີຊີວິດທີ່ມີການ ປ່ຽນແປງຄຸນລັກສະນະ ທາງດ້ານພັນທຸກຳໃນຕະຫຼາດ, ຜູ້ທີ່ໄດ້ພັດທະນາ, ຜູ້ທີ່ໄດ້ຜະລິດ, ຜູ້ທີ່ໄດ້ ສັ່ງຈອງ, ຜູ້ທີ່ໄດ້ສົ່ງອອກ, ຜູ້ທີ່ໄດ້ນຳເຂົ້າ, ຜູ້ທີ່ໄດ້ຂົນສົ່ງ ຫຼື ໄດ້ບໍລິການ.

(ງ) "ມາດຕະການຮອງຮັບ" ໝາຍເຖິງ ກິດຈະກຳທີ່ເປັນຈິງເພື່ອ:

1. ຕິດຕາມ, ເຮັດໃຫ້ລົດໜ້ອຍລົງ, ໃຫ້ຢູ່ໃນວົງຈຳກັດ, ຍົກຍ້າຍໃນກໍລະນີທີ່ເກີດຄວາມເສັຍຫາຍ, ຕາມຄວາມ ເໝາະສົມ;

2. ການຟື້ນບຳລຸງຄືນຊີວະນາໆພັນ ດ້ວຍກິດຈະກຳທີ່ຕ້ອງດຳເນີນການຈັດຕັ້ງປະຕິບັດດັ່ງນີ້:

(1) ການຟື້ນບຳລຸງຄືນຊີວະນາໆພັນ ເຂົ້າສູ່ສະພາບກ່ອນທີ່ຈະເກີດຄວາມເສັຍຫາຍ, ຫຼື ຢູ່ໃນສະພາບ ທີ່ໃກ້ຄຽງທີ່ສຸດ ແລະ ທີ່ອົງກອນຮັບຜິດຊອບຢັ້ງຢືນວ່າເປັນທີ່ສຸດແລ້ວ;

(2) ການຟື້ນບຳລຸງຄືນ ໂດຍການປ່ຽນແທນຊີວະນາໆພັນທີ່ມີການສູນເສັຍ ດ້ວຍສ່ວນ ປະກອບຊີວະ ນາໆພັນທີ່ຄ້າຍຄືກັນ ຫຼື ຈຳພວກອື່ນທີ່ມີການນຳໃຊ້ໃນກໍລະນີດຽວກັນ ພາຍໃຕ້ສະຖານທີ່ໆໄດ້ຮັບ ຄວາມເສັຍຫາຍ ຕາມຄວາມເໝາະສົມ;

3. "ສິ່ງທີ່ບົ່ງບອກ" ເຖິງຜົນກະທົບອັນບໍ່ດີ ແມ່ນຖືກກຳນົດດ້ວຍຕົວວັດແທກທີ່ເປັນພື້ນຖານດັ່ງນີ້:

(ກ) ການປ່ຽນແປງໃນໄລຍະຍາວ ຫຼື ຖາວອນ ທີ່ເຂົ້າໃຈເຖິງການປ່ຽນແປງ ທີ່ບໍ່ສາມາດຊົດເຊີຍຄືນໄດ້ ໂດຍຜ່ານການຟື້ນຄືນຂອງທຳມະຊາດ ພາຍໃນຂອບເວລາທີ່ກຳນົດໄວ້ຢ່າງສົມເຫດສົມຜົນ;

(ຂ) ການປ່ຽນແປງທາງດ້ານປະລິມານ ແລະ ຄຸນນະພາບ, ທີ່ເກີດຈາກຜົນກະທົບອັນບໍ່ດີຕໍ່ສ່ວນປະກອບ ຊີວະນາໆພັນ;

(ຄ) ການລົດໜ້ອຍຖອຍລົງ ຂອງສ່ວນປະກອບຊີວະນາໆພັນ ທີ່ສາມາດຕອບສະໜອງເປັນສິນຄ້າ ແລະ ການບໍລິການ;

(ງ) ການເກີດຜົນກະທົບທາງລົບຕໍ່ສຸຂະພາບຂອງຄົນ ພາຍໃຕ້ຂອບຂອງອະນຸສັນຍາ;

## ມາດຕາ 3
## ຂອບເຂດຄູ້ມຄອງ

1). ອະນຸສັນຍາປະກອບຄູ້ມຄອງຄວາມເສັຍຫາຍທີ່ເກີດຈາກ ສິ່ງທີ່ມີຊີວິດທີ່ມີການປ່ຽນ ແປງຄຸນລັກສະນະທາງດ້ານພັນທຸກາ, ຊຶ່ງພົບແຫຼ່ງກໍາເນີດມາຈາກການເຄື່ອນຍ້າຍຂ້າມຊາຍແດນ. ສິ່ງທີ່ມີຊີວິດທີ່ມີການປ່ຽນແປງຄຸນລັກສະນະດ້ານພັນທຸກາ ທີ່ກ່າວເຖິງ ແມ່ນໃນກໍລະນີ:

(ກ) ທີ່ຕັ້ງໃຈສໍາລັບການນໍາໃຊ້ໂດຍກົງເພື່ອເປັນອາຫານ, ອາຫານສັດ ຫຼື ການປຸງແຕ່ງ;

(ຂ) ການນໍາໃຊ້ພາຍໃນຂອບການຄົ້ນຄວ້າທາງດ້ານວິທະຍາສາດ;

(ຄ) ຕັ້ງໃຈນໍາເຂົ້າເພື່ອປ່ອຍ ຢູ່ໃນທໍາມະຊາດ;

2). ໃນກໍລະນີທີ່ຕັ້ງໃຈ ເຄື່ອນຍ້າຍຂ້າມຊາຍແດນ, ອະນຸສັນຍາປະກອບຄຸ້ມຄອງຄວາມເສັຍຫາຍທີ່ເກີດຈາກອີງກອນທີ່ໄດ້ນໍາໃຊ້ ສິ່ງທີ່ມີຊີວິດທີ່ມີການປ່ຽນແປງຄຸນລັກສະນະດ້ານພັນທຸກາ ທີ່ກ່າວອ້າງໃນວັກທີ່ 1 ຂ້າງເທີງນີ້;

3). ອະນຸສັນຍາປະກອບຍັງໄດ້ ຄູ້ມຄອງຄວາມເສັຍຫາຍທີ່ເກີດຈາກ ການເຄື່ອນຍ້າຍຂ້າມຊາຍແດນທີ່ບໍ່ໄດ້ຕັ້ງໃຈທີ່ໄດ້ລະບຸຢູ່ໃນມາດຕາທີ 17 ຂອງອະນຸສັນຍາ, ພ້ອມດຽວກັນນີ້ຍັງຄຸ້ມຄອງຄວາມເສັຍຫາຍທີ່ເກີດຈາກການເຄື່ອນຍ້າຍຂ້າມຊາຍແດນທີ່ບໍ່ຖືກກົດໝາຍ ທີ່ໄດ້ລະບຸຢູ່ໃນມາດຕາທີ 25 ຂອງອະນຸສັນຍາ,

4). ອະນຸສັນຍາປະກອບຄຸ້ມຄອງຄວາມເສັຍຫາຍ ທີ່ເກີດຈາກພາຍໃນວົງຂອບເຂດການກໍານົດ ສິດອໍານາດອະທິປະໄຕ ແຫ່ງຊາດ;

5). ປະເທດທີ່ເປັນພາຄີ ອາດສາມາດນໍາໃຊ້ເງື່ອນໄຂທີ່ສ້າງຂື້ນພາຍໃຕ້ລະບຽບກົດໝາຍພາຍໃນ ເພື່ອຄຸ້ມຄອງຄວາມເສັຍຫາຍ ພາຍໃນຂອບເຂດສິດອະທິປະໄຕຂອງຕົນ;

6). ໂດຍການຈັດຕັ້ງປະຕິບັດລະບຽບກົດໝາຍພາຍໃນປະເທດ, ອະນຸສັນຍາປະກອບນີ້ ຈະໄດ້ຮັບການຄຸ້ມຄອງຄວາມເສັຍຫາຍ ທີ່ເກີດຈາກການເຄື່ອນຍ້າຍຂ້າມຊາຍແດນ ຂອງສິ່ງທີ່ມີຊີວິດທີ່ມີການປ່ຽນແປງຄຸນລັກສະນະດ້ານພັນທຸກາ ຈາກປະເທດທີ່ບໍ່ເປັນພາຄີ;

7). ອະນຸສັນຍາປະກອບສະບັບນີ້ໄດ້ໃຫ້ການຄຸ້ມຄອງຄວາມເສັຍຫາຍ ທີ່ເກີດຈາກການເຄື່ອນຍ້າຍຂ້າມຊາຍແດນຂອງສິ່ງທີ່ມີ ຊີວິດທີ່ມີການປ່ຽນແປງຄຸນລັກສະນະດ້ານພັນທຸກາ ໂດຍເລີ່ມຕົ້ນຫຼັງຈາກການມີຜົນບັງຄັບ ໃຊ້ຂອງອະນຸສັນຍາປະກອບ ສໍາລັບປະເທດພາຄີທີ່ໄດ້ກໍານົດອະທິປະໄຕຕໍ່ການເຄື່ອນຍ້າຍຂ້າມແດນ;

## ມາດຕາ 4
## ສາຍເຫດ

ສາຍເຫດທີ່ກ່ຽວພັນ ຈະຖືກສ້າງຂື້ນລະຫວ່າງ ຄວາມເສັຍຫາຍ ແລະ ສິ່ງທີ່ມີຊີວິດທີ່ມີການປ່ຽນແປງຄຸນລັກສະນະທາງດ້ານພັນທຸກາ ເປັນບັນຫາທີ່ກ່ຽວຂ້ອງກັບລະບຽບກົດໝາຍພາຍໃນຂອງແຕ່ລະປະເທດ.

## ມາດຕາ 5

## ມາດຕະການຮອງຮັບ

1). ໃນສະພາບທີ່ເກີດຄວາມເສັຍຫາຍ ທີ່ກ່ຽວຂ້ອງກັບທຸກໆກໍລະນີຂອງອົງກອນຮັບຜິດຊອບ, ປະເທດພາຄີ ຈະຮຽກຮ້ອງໃຫ້ຜູ້ປະສານງານ ຫຼື ກຸ່ມປະສານງານທີ່ເໝາະສົມຕ້ອງ:

(ກ) ລາຍງານແຈ້ງໂດຍກົງ ຕໍ່ອົງກອນຮັຍຜິດຊອບ;

(ຂ) ປະເມີນຄວາມເສັຍຫາຍ; ແລະ

(ຄ) ດຳເນີນມາດຕະການຮອງຮັບຕາມຄວາມເໝາະສົມ.

2). ອົງກອນຮັບຜິດຊອບຕ້ອງ:

(ກ) ກຳນົດຜູ້ປະສານ ທີ່ເປັນຜູ້ເຮັດໃຫ້ເກີດຄວາມເສັຍຫາຍ;

(ຂ) ປະເມີນຄວາມເສັຍຫາຍ; ແລະ

(ຄ) ກຳນົດມາດຕະການຮອງຮັບ ຊຶ່ງຕ້ອງດຳເນີນໂດຍຜູ້ປະສານ.

3). ໃນຂະນະທີ່ ຂໍ້ມູນທີ່ກ່ຽວຂ້ອງ, ຮວມເອົາຂໍ້ມູນທາງດ້ານວິທະຍາສາດທີ່ມີ ຫຼື ຂໍ້ມູນແຈ້ງໃນສູນປະສານງານຂໍ້ມູນຄວາມປອດໄພທາງດ້ານຊີວະເຕັກໂນໂລຊີ, ໄດ້ກຳນົດບອກວ່າ ເກີດມີຄວາມເສັຍຫາຍຕໍ່ການດຳລົງຊີວິດ ທີ່ເກີດຈາກຜົນຂອງມາດຕະການຮອງຮັບບໍ່ໄດ້ຖືກຈັດຕັ້ງປະຕິບັດພາຍໃຕ້ຂອບເວລາທີ່ຕັ້ງໄວ້, ຜູ້ປະສານຕ້ອງດຳເນີນການຕາມຄວາມເໝາະສົມຂອງມາດຕະການຮອງຮັບ ທີ່ສອດຄ່ອງກັນຄວາມເສັຍຫາຍ.

4). ອົງກອນຮັບຜິດຊອບ ສາມາດຈັດຕັ້ງປະຕິບັດ ມາດຕະການຮອງຮັບທີ່ເໝາະສົມ, ຮວມເອົາທັງໃນກໍລະນີທີ່ຜູ້ປະສານໄດ້ດຳເນີນການຜິດພາດ ເຊັ່ນດຽວກັນ.

5). ອົງກອນຮັບຜິດຊອບ ແມ່ນມີສິດໃນການຮຽກຄືນຈາກຜູ່ປະສານກ່ຽວກັບມູນຄ່າ ແລະ ການໃຊ້ຈ່າຍຕໍ່ການເກີດອຸບັດເຫດ, ການປະເມີນຄວາມເສັຍຫາຍ ແລະ ການຈັດຕັ້ງປະຕິບັດ ມາດຕະການຮອງຮັບທີ່ເໝາະສົມ. ປະເທດພາຄີອາດກຳນົດພາຍໃຕ້ລະບຽບກົດໝາຍພາຍໃນປະເທດ ໃນກໍລະນີເຫດການອັນອື່ນໆກ່ຽວກັບຜູ້ປະສານທີ່ບໍ່ມີ ຄວາມສາມາດຮອງຮັບມູນຄ່າ ແລະ ການໃຊ້ຈ່າຍໄດ້.

6). ການຕົກລົງຂອງອົງກອນຮັບຜິດຊອບ ທີ່ຮຽກຮ້ອງໃຫ້ຜູ່ປະສານດຳເນີນມາດຕະການຮອງຮັບ ຕ້ອງມີເຫດຜົນເປັນຈິງ ແລະ ການຕົກລົງດັ່ງກ່າວຕ້ອງໄດ້ແຈ້ງເຖິງຜູ້ປະສານ. ລະບຽບກົດໝາຍພາຍໃນປະເທດຕ້ອງກຳນົດຂະບວນການທາງສານ, ຮວມເອົາຄວາມພ້ອມທາງດ້ານການຈັດການ ຫຼື ທວນຄືນການພິພາກສາຂອງການຕົກລົງນັ້ນ. ອົງກອນຮັບຜິດຊອບຕ້ອງ, ພາຍໃຕ້ລະບຽບກົດໝາຍພາຍໃນປະເທດ, ຕ້ອງແຈ້ງຕໍ່ຜູ້ປະສານອີກກ່ຽວກັບຂະບວນການທາງສານທີ່ມີ. ການຮ້ອງຟ້ອງຕໍ່ຂະບວນການທາງສານ ຕ້ອງບໍ່ຂົ່ມຂູ່ອົງກອນຮັບຜິດຊອບ ຈາກການດຳເນີນມາດຕະການຮອງຮັບໃນສະພາບທີ່ເໝາະສົມ, ຢ່າງໜ້ອຍສຸດຕ້ອງໄດ້ກຳນົດດ້ວຍລະບຽບກົດໝາຍພາຍໃນ.

7). ໃນການຈັດຕັ້ງປະຕິບັດມາດຕານີ້ ແລະ ກ່ຽວກັບການກຳນົດມາດຕະການຮອງຮັບອັນສະເພາະພິເສດ ທີ່ຈັດຕັ້ງ ຫຼື ດຳເນີນການໂດຍອົງກອນຮັບຜິດຊອບ, ຕາມຄວາມເໝາະສົມປະເທດພາຄີອາດນຳໃຊ້ມາດຕະການຮອງຮັບ ທີ່ມີຢູ່ແລ້ວຕາມລະບຽບກົດໝາຍພານໃນປະເທດ ທີ່ກ່ຽວກັບສິດຜູກພັນຕາມຄະດີຄວາມ.

8). ມາດຕະການຮອງຮັບ ຕ້ອງຖືກຈັດຕັ້ງປະຕິບັດ ສອດຄ່ອງກັບ ລະບຽບກົດໝາຍພານໃນປະເທດ.

## ມາດຕາ 6
## ຂໍ້ຍົກເວັ້ນ

1). ພາຍໃຕ້ລະບຽບກົດໝາຍພາຍໃນປະເທດ, ປະເທດພາຄີສາມາດກໍານົດຂໍ້ຍົກເວັ້ນດັ່ງນີ້:

(ກ) ກໍລະນີເກີດສິ່ງທີ່ເກີນຄວາມຄາດຄະເນ ຫຼື ໄພພິບັດທໍາມະຊາດ; ແລະ

(ຂ) ກໍລະນີເກີດສົງຄາມ ຫຼື ການຈໍລະຈົນ.

2). ພາຍໃຕ້ລະບຽບກົດໝາຍພາຍໃນປະເທດ, ປະເທດພາຄີສາມາດກໍານົດຂໍ້ຍົກເວັ້ນອື່ນໆ ເພື່ອເປັນການເຕີມເຕັມບັນຫາພາຍໃນໄດ້ອີກ.

## ມາດຕາ 7
## ຂອບຈໍາກັດດ້ານເວລາ

ພາຍໃຕ້ລະບຽບກົດໝາຍພາຍໃນປະເທດ, ປະເທດພາຄີສາມາດກໍານົດ:

(ກ) ຂອບຈໍາກັດດ້ານເວລາໂດຍທົ່ວໄປ ແລະ ຫຼື ສະເພາະເຈາະຈົງ ທີ່ຮວມເອົາໄວ້ສໍາລັບບັນດາກິດຈະກໍາທີ່ກ່ຽວຂອງກັບມາດຕະການຮອງຮັບ; ແລະ

(ຂ) ຂໍ້ແນະນໍາກ່ຽວກັບຮອບເວລາ ທີ່ນໍາໃຊ້ຂອບຈໍາກັດດ້ານເວລາ.

## ມາດຕາ 8
## ຂອບເຂດດ້ານການເງິນ

ພາຍໃຕ້ລະບຽບກົດໝາຍພາຍໃນປະເທດ, ປະເທດພາຄີສາມາດກໍານົດ ຂອບເຂດທາງດ້ານການເງິນ ສໍາລັບມູນຄ່າຂອງການຟື້ນຟູບໍາລຸງຄືນ ແລະ ການໃຊ້ຈ່າຍທີ່ກ່ຽວຂ້ອງກັບມາດຕະການຮອງຮັບ.

## ມາດຕາ 9
## ສິດການຮ້ອງຟ້ອງ

ອະນຸສັນຍາປະກອບສະບັບນີ້ ຈະບໍ່ຈໍາກັດ ຫຼື ຫວງຫ້າມສິດການຮ້ອງຟ້ອງໃດໆ ຫຼື ໄຕ່ສວນ ໃນກໍລະນີທີ່ຜູ້ປະສານອາດມີການປະທະກັບບຸກຄົນອື່ນໆ.

## ມາດຕາ 10
## ຄວາມໝັ້ນຄົງດ້ານການເງິນ

1). ພາຍໃຕ້ລະບຽບກົດໝາຍພາຍໃນປະເທດ, ປະເທດພາຄີສາມາດໃຊ້ສິດກຳນົດ ຄວາມໝັ້ນຄົງທາງດ້ານການເງິນ.

2). ປະເທດພາຄີຈະຈັດຕັ້ງນຳໃຊ້ສິດທີ່ໄດ້ກ່າວໄວ້ໃນວັກທີ່ 1 ຂ້າງເທິງນີ້ ໂດຍໃຫ້ສອດຄ່ອງກັບສິດ ແລະ ພັນທະພາຍໃຕ້ກົດໝາຍສາກົນ, ຮວມທັງການເອົາໃຈໃສ່ເນື້ອໃນສາມວັກສຸດທ້າຍຂອງພາກອະລຳພະບົດ ຂອງອະນຸສັນຍາ.

3). ໃນກອງປະຊຸມພາຄີຄັ້ງທີ່ໜຶ່ງ ທີ່ໃຊ້ເປັນການປະຊູມຂອງບັນດາປະເທດທີ່ເປັນພາຄີຂອງອະນຸສັນຍາ ພາຍຫຼັງທີ່ສັນຍາມີຜົນບັງຄັບໃຊ້, ສາມາດສະເໜີຕໍ່ກອງເລຂາ ເພື່ອດຳເນີນການສຶກສາໃນລາຍລະອຽດ ທີ່ຈະລົງເລິກດັ່ງນີ້:

   (ກ) ຮູບແບບຂອງ ກົນໄກຄວາມໝັ້ນຄົງດ້ານການເງິນ;

   (ຂ) ກົນໄກໃນການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ, ຮວມທັງໃນປະເທດທີ່ກຳລັງພັດທະນາ; ແລະ

   (ຄ) ການກຳນົດຕາມຄວາມເໝາະສົມ ເພື່ອຕອບສະໜອງຄວາມໝັ້ນຄົງທາງດ້ານການເງິນ.

## ມາດຕາ 11
## ຄວາມຮັບຜິດຊອບຂອງປະເທດທີ່ລະເມີດຕໍ່ລະບຽບການສາກົນ

ອະນຸສັນຍາປະກອບສະບັບນີ້ ຈະບໍ່ມີຜົນກະທົບໃດໆຕໍ່ສິດ ແລະ ພັນທະຂອງບັນດາປະເທດທີ່ເປັນພາຄີຂອງສັນຍາພາຍໃຕ້ລະບຽບການຂອງກົດໝາຍສາກົນທົ່ວໆໄປ ໂດຍຮວມເອົາທັງຄວາມຮັບຜິດຊອບຂອງປະເທດທີ່ລະເມີດຕໍ່ລະບຽບການສາກົນ.

## ມາດຕາ 12
## ການຈັດຕັ້ງປະຕິບັດ ແລະ ການພົວພັນ ກັບສິດຜູກພັນດ້ານຄະດີຄວາມ

1). ພາຍໃຕ້ລະບຽບກົດໝາຍພາຍໃນປະເທດ, ປະເທດພາຄີສາມາດກຳນົດກ່ຽວກັບລະບຽບການ ແລະ ຂະບວນການທີ່ກ່ຽວກັບຄວາມເສັຍຫາຍ, ເພື່ອເປັນການຈັດຕັ້ງປະຕິບັດພັນທະອັນນີ້, ປະເທດພາຄີຕ້ອງໄດ້ກຳນົດມາດຕະການຮອງຮັບ ທີ່ກ່ຽວພັນກັບອະນຸສັນຍາປະກອບ ແລະ ຕາມຄວາມເໝາະສົມ ເພື່ອໃຫ້ສາມາດ:

   (ກ) ນຳໃຊ້ກົດໝາຍພາຍໃນປະເທດທີ່ມີ, ຮວມທັງ, ທີ່ສາມາດຈັດຕັ້ງປະຕິບັດໄດ້, ລະບຽບການທົ່ວໄປ ແລະ ຂະບວນການກ່ຽວກັບ ສິດຜູກພັນດ້ານຄະດີຄວາມ;

(ຂ) ນຳໃຊ້ ຫຼື ພັດທະນາລະບຽບການ ແລະ ຂະບວນການກ່ຽວກັບສິດຜູກພັນດ້ານຄະດີຄວາມ ອັນເປັນພິເສດເພື່ອຈຸດປະສົງດັ່ງກ່າວ; ຫຼື

(ຄ) ນຳໃຊ້ ຫຼື ພັດທະນາ ການປະສົມປະສານທັງສອງຢ່າງ.

2). ກ່ຽວກັບເປົ້າໝາຍເພື່ອການກຳນົດລະບຽບການ ແລະ ຂະບວນການທີ່ພຽງພໍພາຍໃຕ້ລະບຽບກົດໝາຍພາຍໃນປະເທດ ທາງດ້ານສິດຜູກພັນດ້ານຄະດີຄວາມສຳລັບຄວາມເສັຍຫາຍທາງດ້ານວັດຖຸ ຫຼື ບຸກຄົນ ທີ່ສອດຄ່ອງກັບຄວາມເສັຍຫາຍຕາມທີ່ໄດ້ນິຍາມໄວ້ໃນ ມາດຕາທີ່ 2, ວັກ 2(ຂ), ປະເທດພາຄີສາມາດ:

(ກ) ສືບຕໍ່ການນຳໃຊ້ ກົດໝາຍທົ່ວໄປພາຍໃນປະເທດທີ່ມີກ່ຽວກັບ ສິດຜູກພັນດ້ານຄະດີຄວາມ;

(ຂ) ພັດທະນາ ແລະ ນຳໃຊ້ ຫຼື ສືບຕໍ່ໃນການນຳໃຊ້ກົດໝາຍກ່ຽວກັບສິດຜູກພັນດ້ານຄະດີຄວາມ ອັນເປັນພິເສດເພື່ອຈຸດປະສົງດັ່ງກ່າວ; ຫຼື

(ຄ) ພັດທະນາ ແລະ ນຳໃຊ້ ຫຼື ສືບຕໍ່ການນຳໃຊ້ ການປະສົມປະສານທັງສອງຢ່າງ.

3). ໃນຂະນະທີ່ກຳລັງພັດທະນາກົດໝາຍກ່ຽວກັບສິດຜູກພັນດ້ານຄະດີຄວາມ ທີ່ໄດ້ກຳນົດໃນຂໍ້ (ຂ) ຫຼື (ຄ) ຂອງວັກທີ່ 1 ຫຼື 2 ທີ່ກ່າວມາຂ້າງເທິງ, ປະເທດພາຄີສາມາດກຳນົດ ອົງປະກອບດັ່ງລຸ່ມນີ້ຕາມຄວາມເໝາະສົມ:

(ກ) ຄວາມເສັຍຫາຍ;

(ຂ) ມາດຕະຖານຂອງສິດຜູກພັນ ຮວມທັງການກຳນົດຊັດເຈນ ຫຼື ຕາມກໍລະນີຄວາມຜິດໃນສິດຜູກພັນ;

(ຄ) ການຈັດລະດັບຊັ້ນຂອງສິດຜູກພັນ, ຕາມຄວາມເໝາະສົມ;

(ງ) ສິດໃນການອຸທອນຮ້ອງຂໍ.

## ມາດຕາ 13,
## ການປະເມີນ ແລະ ການທົບທວນ

ກອງປະຊຸມພາຄີ ທີ່ໃຊ້ເປັນການປະຊູມຂອງບັນດາປະເທດທີ່ເປັນພາຄີຂອງອະນຸສັນຍາ ຈະດຳເນີນການທົບທວນປະສິດທິຜົນໃນການຈັດຕັ້ງປະຕິບັດ ອະນຸສັນຍາປະກອບພາຍຫຼັງ 5 ປີຂອງການມີຜົນບັງຄັບໃຊ້ ໃນທຸກໆ 5 ປີຕໍ່ມາ, ໂດຍການສະໜອງບັນດາຂໍ້ມູນທີ່ຈຳເປັນ ເຊັ່ນການທົບທວນທີ່ໄດ້ຮັບຈາກປະເທດທີ່ເປັນພາຄີ. ການທົບທວນຈະຕ້ອງ ດຳເນີນການພາຍໃຕ້ຂອບຂອງການປະເມີນ ແລະ ການທົບທວນຂອງອະນຸສັນຍາ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາທີ່ 35 ຂອງອະນຸສັນຍາ, ໄປຄຽງຄູ່ກັນກັບມະຕິຕົກລົງປະເທດພາຄີຂອງສັນຍາ. ການທົບທວນໃນຄັ້ງທຳອິດຕ້ອງບັນຈຸການທົບທວນປະສິດທິຜົນຂອງ ມາດຕາທີ່ 10 ແລະ 12.

## ມາດຕາ 14
## ກອງປະຊຸມພາຄີ ທີ່ໃຊ້ເປັນການປະຊຸມບັນດາປະເທດທີ່ເປັນພາຄີຂອງອະນຸສັນຍາ

1). ອີງຕາມວັກທີ 2 ຂອງມາດຕາທີ່ 32 ຂອງສົນທິສັນຍາ, ກອງປະຊຸມພາຄີ ທີ່ໃຊ້ເປັນການປະຊຸມຂອງບັນດາປະເທດທີ່ເປັນພາຄີຂອງອະນຸສັນຍາ ຈະໃຊ້ເປັນກອງປະຊຸມພາຄີຂອງອະນຸສັນຍາປະກອບ.

2). ກອງປະຊຸມພາຄີ ທີ່ໃຊ້ເປັນການປະຊຸມຂອງບັນດາປະເທດທີ່ເປັນພາຄີຂອງອະນຸສັນຍາ ຈະເປັນບ່ອນທີ່ໃຊ້ເປັນເວທີໃນການກວດກາຄືນການຈັດຕັ້ງປະຕິບັດອະນຸສັນຍາປະກອບ ແລະ ຈະໃຫ້ການຕັດສິນບັນຫາຕ່າງໆທີ່ສຳຄັນເພື່ອເປັນການສົ່ງເສີມການຈັດຕັ້ງປະຕິບັດບັນຫາຕ່າງໆໃຫ້ມີປະສິດທິຜົນ. ມັນຈະຖືກຮັບຮອງຕາມໜ້າທີ່ ໂດຍໄດ້ກຳນົດໄວ້ຕາມອະນຸສັນຍາປະກອບ ແລະ ໜ້າທີ່ຕາມ ວັກທີ 4(ກ) ແລະ (ສ) ຂອງມາດຕາທີ່ 29 ຂອງອະນຸສັນຍາ.

## ມາດຕາ 15
## ກອງເລຂາ

ກອງເລຂາທີ່ໄດ້ຖືກສ້າງຕັ້ງຂຶ້ນ ຕາມມາດຕາທີ່ 24 ຂອງສົນທິສັນຍາ ຈະເຮັດໜ້າທີ່ເປັນກອງເລຂາຂອງອະນຸສັນຍາປະກອບສະບັບນີ້.

## ມາດຕາ 16
## ການກ່ຽວພັນກັບສົນທິສັນຍາ ແລະ ອະນຸສັນຍາ

1). ອະນຸສັນຍາປະກອບສະບັບນີ້ ຈະເປັນອະນຸສັນຍາປະກອບອະນຸສັນຍາ ແລະ ຈະບໍ່ມີການດັດແກ້ ຫຼື ມີການເພີ່ມເຕີມໃດໆ ຕໍ່ກັບ ອະນຸສັນຍາ.

2). ອະນຸສັນຍາປະກອບສະບັບນີ້ ຈະບໍ່ມີຜົນກະທົບໃດໆຕໍ່ສິດ ແລະ ພັນທະຂອງບັນດາປະເທດທີ່ເປັນພາຄີຂອງອະນຸສັນຍາປະກອບພາຍໃຕ້ ສົນທິສັນຍາ ແລະ ອະນຸສັນຍາ.

3). ຍົກເວັ້ນໃນກໍລະນີທີ່ ອະນຸສັນຍາປະກອບສະບັບນີ້ໄດ້ມີການກຳນົດເອົາໄວ້, ບັນດາຂໍ້ກຳນົດຂອງ ສົນທິສັນຍາ ແລະ ອະນຸສັນຍາ ຈະຖືກຮັບຮອງຕາມປະລິຍາຍຕໍ່ ອະນຸສັນຍາປະກອບສະບັບນີ້.

4). ປາດສະຈາກສິ່ງທີ່ໄດ້ກ່າວມາໃນວັກ 3 ຂ້າງເທິງນີ້, ອະນຸສັນຍາປະກອບສະບັບນີ້ ຈະບໍ່ມີຜົນກະທົບໃດໆຕໍ່ສິດ ແລະ ພັນທະຂອງບັນດາປະເທດທີ່ເປັນພາຄີຂອງອະນຸສັນຍາປະກອບ ພາຍໃຕ້ກົດໝາຍສາກົນ.

## ມາດຕາ 17
## ການເຊັນຮັບຮູ້

ອະນຸສັນຍາປະກອບຈະເປີດໃຫ້ປະເທດທີ່ເປັນພາຄີຂອງອະນຸສັນຍາເຊັນຮັບຮູ້ ທີ່ສຳນັກງານໃຫຍ່ຂອງອົງການສະຫະປະຊາຊາດ ຢູ່ນິວຢອກ ນັບຕັ້ງແຕ່ວັນທີ 07 ມີນາ 2011 ເຖິງວັນທີ 06 ມີນາ 2012.

## ມາດຕາ 18
## ການມີຜົນບັງຄັບໃຊ້

1). ອະນຸສັນຍາປະກອບສະບັບນີ້ ຈະມີຜົນບັງຄັບໃຊ້ ພາຍໃນເວລາ 90 ວັນ ຫຼັງຈາກມື້ທີ່ມີການລົງທະບຽນຄົບຈຳນວນ 40 ສະບັບ ຂອງການໃຫ້ ສັດຕະຍາບັນ, ຮັບ, ຮັບຮອງ ຫຼື ເຂົ້າຮ່ວມ ຂອງບັນດາປະເທດ ຫຼື ອົງການຈັດຕັ້ງປະສານງານ ເສດຖະກິດໃນພາກພື້ນ, ຊຶ່ງເປັນພາຄີຂອງອະນຸສັນຍາ.

2). ອະນຸສັນຍາປະກອບສະບັບນີ້ ຈະມີຜົນບັງຄັບໃຊ້ກັບບັນດາປະເທດ ຫຼື ອົງການຈັດຕັ້ງປະສານງານ ເສດຖະກິດໃນພາກພື້ນ ທີ່ໄດ້ໃຫ້ສັດຕະຍາບັນ, ຮັບ, ຮັບຮອງ ຫຼື ເຂົ້າຮ່ວມ ຫຼັງຈາກມື້ທີ່ມີການລົງທະບຽນຄົບຈຳນວນ 40 ສະບັບ ທີ່ໄດ້ກ່າວມາໃນວັກ 1 ຂ້າງເທິງນີ້, ພາຍໃນເວລາ 90 ວັນ ຫຼັງຈາກມື້ທີ່ປະເທດ ຫຼື ອົງການຈັດຕັ້ງປະສານງານ ເສດຖະກິດໃນພາກພື້ນ ທີ່ໄດ້ໃຫ້ ສັດຕະຍາບັນ, ຮັບ, ຮັບຮອງ ຫຼື ເຂົ້າຮ່ວມ ຫຼື ມື້ທີ່ອະນຸສັນຍາມີຜົນບັງຄັບໃຊ້ກັບປະເທດ ຫຼື ອົງການຈັດຕັ້ງປະສານງານ ເສດຖະກິດໃນພາກພື້ນ, ຊຶ່ງອາດຊ້າກວ່າຕາມກໍລະນີ.

3). ສຳລັບເປົ້າໝາຍທີ່ໄດ້ມີການບັນຈຸໄວ້ໃນວັກທີ 1 ແລະ 2 ຂ້າງເທິງນີ້, ການລົງທະບຽນໃດໆຂອງ ອົງການຈັດຕັ້ງປະສານງານເສດຖະກິດໃນພາກພື້ນ ຈະບໍ່ນັບເພີ່ມເຕີມໃສ່ໃນຈຳນວນ ການລົງທະບຽນຂອງບັນດາປະເທດທີ່ເປັນສະມາຊິກຂອງອົງການຈັດຕັ້ງນັ້ນໆ.

## ມາດຕາ 19
## ການຍົກເວັ້ນ

ບໍ່ມີການຍົກເວັ້ນໃດໆ ທີ່ໄດ້ອະນຸຍາດພາຍໃຕ້ ອະນຸສັນຍາປະກອບສະບັບນີ້.

## ມາດຕາ 20
## ການຖອນຕົວ

1). ພາຍໃນເວລາສອງປີ, ນັບຈາກເວລາທີ່ອະນຸສັນຍາປະກອບມີຜົນບັງຄັບໃຊ້ກັບປະເທດພາຄີໃດໆ, ປະເທດພາຄີນັ້ນສາມາດຖອນຕົວອອກຈາກການເປັນພາຄີຂອງອະນຸສັນຍາປະກອບ ດ້ວຍການຍື່ນຄຳຮ້ອງເປັນລາຍລັກ ອັກສອນ ຕໍ່ໜ່ວຍງານຈົດທະບຽນ.

2). ການຖອນຕົວຈະມີຜົນພາຍຫຼັງເວລາກຳນົດໜຶ່ງປີ ນັບຈາກທີ່ໜ່ວຍງານຈົດທະບຽນໄດ້ແຈ້ງການ ຮັບຄຳຮ້ອງ ຫຼື ພາຍໃຕ້ເວລາທີ່ຊ້າກ່ວາໄດ້ກຳນົດໄວ້ເປັນອັນສະເພາະ ຕາມຄຳຮ້ອງໃນການຖອນຕົວ.

3). ປະເທດພາຄີໃດໆ ທີ່ໄດ້ຖອນຕົວອອກຈາກການເປັນພາຄີຂອງອະນຸສັນສັນຍາ ຕາມມາດຕາທີ 39 ຂອງອະນຸສັນຍາ ຈະຖືກພິຈາລະນາຮັບຮອງວ່າໄດ້ ຖອນຕົວອອກຈາກອະນຸສັນຍາປະກອບເຊັ່ນດຽວກັນ.

## ມາດຕາ 21
## ຄຸນຄ່າເອກະສານ

ເອກະສານຕົ້ນສະບັບຂອງອະນຸສັນຍາປະກອບສະບັບນີ້, ປະກອບດ້ວຍພາສາ ອາຣັບ, ຈີນ, ອັງກິດ, ຝຣັ່ງ, ຣັດເຊັຍ ແລະ ແອດສະປາຍ ແມ່ນມີຄຸນຄ່າເທົ່າທຽມກັນ, ຊຶ່ງໄດ້ຖືກລົງທະບຽນໄວ້ກັບເລຂາທິການໃຫຍ່ອົງການສະຫະປະຊາຊາດ.